# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ........................................ 1

II. ການເຄືອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ ........................................ 7

**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ພະຈິກ 2024**

**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 11 /11/2024, ອະນຸກຳມະການເນື້ອໃນກອງປະຊຸມໃຫຍ່ຄັ້ງທີ 14 ຂອງພັກ, ໄດ້ເປີດກອງປະຊຸມ ຄັ້ງທີ 3 ເພື່ອປະກອບຄຳເຫັນໃສ່ຮ່າງບົດລາຍງານການເມືອງ, ຮ່າງບົດສະຫຼຸບວຽກງານກໍ່ສ້າງພັກ ແລະ ກົດລະບຽບພັກ ແລະ ວັນທີ 13/11/2024, ອະນຸກຳມະການເສດຖະກິດ-ສັງຄົມ ຂອງກອງປະຊຸມໃຫຍ່ ຄັ້ງທີ 14 ຂອງພັກກໍ່ໄດ້ປະຊຸມກ່ຽວກັບແຜນການເສດຖະກິດ-ສັງຄົມແຫ່ງຊາດ 5 ປີ. ບຸລິມະສິດອັນດັບໜຶ່ງແມ່ນເປົ້າໝາຍຍຸດທະສາດຮອດປີ 2030, ວິໄສທັດປີ 2045, ທິດທາງປະຕິບັດ 2 ຄາດໝາຍ 100 ປີ ຂອງມະຕິກອງປະຊຸມໃຫຍ່ຄັ້ງທີ 13 ຮັບປະກັນໃຫ້ບົດລາຍງານແມ່ນ "ໂຄງການດຳເນີນງານ" ຢ່າງແທ້ຈິງ, ມີເອກະລາດ, ປະຊາທິປະໄຕ, ຮັ່ງມີ, ຮຸ່ງເຮືອງສີວິໄລ, ມີສະຖຽນລະພາບດ້ານເສດຖະກິດມະຫາພາກ, ສອດຄ່ອງກັບວັດທະນະທຳ-ສັງຄົມ, ປົກປັກຮັກສາສິ່ງແວດລ້ອມ, ຄວາມໝັ້ນຄົງ, ຕ້ອງມີການຖອດຖອນບົດຮຽນ, ຍົກສູງຄຸນນະພາບເສດຖະກິດການຕະຫຼາດຕາມທິດສັງຄົມນິຍົມ, ຫັນເປັນອຸດສາຫະກຳທັນສະໄໝນຳໃຊ້ວິທະຍາສາດ-ເຕັກໂນໂລຊີ, ນະວັດຕະກຳ; ຊຸກຍູ້ການຫັນປ່ຽນດີຈີຕອນຮອບດ້ານ.

ວັນທີ 25/11/2024, ກອງປະຊຸມຄະນະບໍລິຫານງານສູນກາງພັກສະໄໝທີ XIII ໄດ້ຈັດກອງປະຊຸມເພື່ອພິຈາລະນາ ແລະ ປະກອບຄຳເຫັນໃສ່ບາງເນື້ອໃນສຳຄັນຄື 1).ບົດສະຫຼຸບການຈັດຕັ້ງປະຕິບັດມະຕິ ເລກທີ 18-NQ/TW, ລົງວັນທີ 25/11/2017 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XII "ບາງບັນຫາກ່ຽວກັບການສືບຕໍ່ປ່ຽນແປງໃໝ່, ຊັບຊ້ອນກົງຈັກການຈັດຕັ້ງ ຂອງລະບົບການເມືອງໃຫ້ມີຄວາມເປັນລະບຽບ, ກະທັດຮັດມີປະສິດທິພາບ ແລະ ປະສິດທິຜົນ 2).ໂຄງການໄຟຟ້ານິວເຄລຍຂອງຫວຽດນາມ: ຄະນະບໍລິຫານງານສູນກາງພັກ ໄດ້ເຫັນດີໂດຍພື້ນຖານໃຫ້ເລີ່ມດຳເນີນໂຄງການໄຟຟ້ານິວເຄຼຍ ນິ້ງຖວ້ນ ຄືນໃໝ່ ໂດຍມອບໃຫ້ອົງການທີ່ກ່ຽວຂ້ອງ ສືບຕໍ່ຄົ້ນຄວ້າໂຄງການໄຟຟ້ານິວເຄຼຍ ຫວຽດນາມ ເພື່ອຮັບປະກັນຄວາມໝັ້ນຄົງດ້ານພະລັງງານແຫ່ງຊາດ ແລະ ຕອບສະໜອງບັນດາເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ, ເພີ່ມທະວີຄວາມສາມາດບົ່ມຊ້ອນດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອການພັດທະນາແບບຍືນຍົງຂອງປະເທດ; 3).ວຽກງານບຸກຄະລາກອນ: ປະກອບຄຳເຫັນໃສ່ບຸກຄະລາກອນຜູ້ຈະເຂົ້າມາບໍລິຫານໃນຄະນະລັດຖະບານ ເພື່ອນຳສະເໜີສະພາແຫ່ງຊາດ ຮັບຮອງເອົາຕຳແໜ່ງລັດຖະມົນຕີກະຊວງການເງິນ ແລະ ລັດຖະມົນຕີວ່າການກະຊວງຄົມມະນາຄົມ-ຂົນສົ່ງ; ຄະນະປະຈຳ, ເລຂາທິການສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ພ້ອມນີ້ຍັງ ກວດກາ ແລະ ປະຕິບັດວິໄນຕໍ່ສະມາຊິກພັກຈຳນວນໜຶ່ງ.

### 2) ພັກກອມມູນິດຈີນ

ວັນທີ 16/11/2024, ສະຫາຍ ສີ ຈິ້ນຜິງ ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ໂຈ ໄບເດັນ ປະທານາທິບໍດີອາເມຣິກາ ຢູ່ນະຄອນຫຼວງລີມາ ປະເທດເປຣູ. ສອງຝ່າຍໄດ້ຕີລາຄາຄືນ ສາຍພົວພັນ ລະຫວ່າງຈີນ-ອາເມຣິກາ ໃນ 45 ປີ ຜ່ານມາ, ເຫັນວ່າ ຖ້າສອງປະເທດເປັນຄູ່ຮ່ວມມື, ເປັນໝູ່ເພື່ອນ, ສະແຫວງຫາສິ່ງທີ່ຄືກັນ ແລະ ສະຫງວນສິ່ງທີ່ຕ່າງກັນ, ສ້າງຜົນປະໂຫຍດໃຫ້ແກ່ກັນ ກໍຈະເຮັດໃຫ້ສາຍພົວພັນລະຫວ່າງຈີນ-ອາເມຣິກາ ໄດ້ຮັບການພັດທະນາຢ່າງວ່ອງໄວ. ຖ້າວ່າສອງປະເທດເປັນຄູ່ແຂ່ງຂັນກັນ, ເປັນປໍລະປັກກັນ ຈະເຮັດໃຫ້ສາຍພົວພັນລະຫວ່າງສອງປະເທດກໍຈະປະສົບຄວາມຫຍຸ້ງຍາກ; ຈີນ-ອາເມຣິກາ ຄວນເລີ່ມຈາກຄວາມສຸກຂອງປະຊາຊົນສອງຊາດ ແລະ ຜົນປະໂຫຍດຮ່ວມຂອງປະຊາຄົມໂລກ, ສືບຕໍ່ຊອກຄົ້ນວິທີການທີ່ສອງປະເທດປະຕິບັດຕໍ່ກັນຢ່າງຖືກຕ້ອງ ເພື່ອບັນລຸໃຫ້ສອງປະເທດຢູ່ຮ່ວມກັນໂດຍສັນຕິຢ່າງຍາວນານ.

ລະຫວ່າງ 6-7/11/2024, ທີ່ນະຄອນຄຸນມິງ ສປ ຈີນ ໄດ້ຈັດກອງປະຊຸມສຸດຍອດອະນຸພາກພື້ນແມ່ນ້ຳຂອງ (GMS) ຄັ້ງທີ 8 ຊຶ່ງມີ ຜູ້ນຳ 6 ປະເທດຄື: ຈີນ, ກຳປູເຈຍ, ລາວ, ມຽນມາ,ໄທ ແລະ ຫວຽດນາມ ພ້ອມດ້ວຍຜູ້

ວ່າການທະນາຄານພັດທະນາອາຊີ (ADB) ເຂົ້າຮ່ວມ. ກອງປະຊຸມສຸດຍອດ GMS ຄັ້ງນີ້ ໄດ້ປຶກສາຫາລື ແລະ ວາງທິດທາງກົນໄກການຮ່ວມມື GMS ໃນຕໍ່ໜ້າ ໃຫ້ສອດຄ່ອງກັບການພັດທະນາດ້ວຍນະວັດຕະກໍາໃນຍຸກໃໝ່ ແລະ ພ້ອມກັນນີ້ ຍັງມີກອງປະຊຸມສຸດຍອດ ກໍາປູເຈຍ-ລາວ-ມຽນມາ-ຫວຽດນາມ (CLMV) ຄັ້ງທີ 11, ໂດຍການເປັນປະທານ ຂອງນາຍົກລັດຖະມົນຕີ ສສ ມຽນມາ, ພາຍໃຕ້ຄໍາຂວັນ: “ມິດຕະພາບ ແລະ ຄວາມສາມັກຄີ ເພື່ອປະຊາຄົມທີ່ເຂັ້ມແຂງ ແລະ ຮຸ່ງເຮືອງສີວິໄລ”; ກອງປະຊຸມ ໄດ້ຮັບຊາບຄວາມຄືບໜ້າ ການຈັດຕັ້ງປະຕິບັດ ໃນໄລຍະຜ່ານມາ ແລະ ທິດທາງການຮ່ວມມືໃນຕໍ່ໜ້າ ລວມທັງຊຸກຍູ້ ແລະ ຂົນຂວາຍການສະໜັບສະໜູນ ຈາກບັນດາຄູ່ຮ່ວມພັດທະນາ ຂອງຂອບການຮ່ວມມື CLMV; ໄດ້ຮັບຮອງເອົາຖະແຫຼງການຮ່ວມຂອງກອງປະຊຸມສຸດຍອດ CLMV ຄັ້ງທີ 11 ແລະ ມອບການເປັນປະທານ CLMV ຄັ້ງທີ 12 ໃຫ້ແກ່ ສສ ຫວຽດນາມ. ນອກຈາກນີ້, ໃນວັນທີ 7/11/2024, ທີ່ນະຄອນຄຸນມິງ ສປຈີນ, ນາຍົກລັດຖະມົນຕີ ສປປ ລາວ ໄດ້ເປັນປະທານກອງປະຊຸມ ACMECS ຄັ້ງທີ 10 ພາຍໃຕ້ຄໍາຂວັນ: “ກ້າວສູ່ການເຊື່ອມຈອດທີ່ໄລ່ງລ່ຽນເພື່ອການເຊື່ອມໂຍງອະນຸພາກພື້ນແມ່ນໍ້າຂອງ”, ກອງປະຊຸມ ໄດ້ຮັບຊາບຄວາມຄືບໜ້າ ແລະ ຕີລາຄາຄືນໝາກຜົນຂອງການຈັດຕັ້ງປະຕິບັດແຜນແມ່ບົດ ACMECS ໄລຍະ 2019-2023 ແລະ ຮ່ວມກັນປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ ແນໃສ່ການສ້າງເງື່ອນໄຂເພື່ອການເຊື່ອມຈອດອະນຸພາກພື້ນ ທີ່ມີປະສິດທິພາບ ກໍຄືການເຊື່ອມໂຍງດ້ານເສດຖະກິດກັບປະເທດສະມາຊິກ ACMECS, ພາກພື້ນ ແລະ ສາກົນ; ໄດ້ຮັບຮອງເອົາ ນິວຊີແລນ ເຂົ້າເປັນຄູ່ຮ່ວມພັດທະນາຂອງ ACMECS ຊຸດທີສອງ ແລະ ຮັບຮອງເອົາ 2 ເອກະສານຄື:ຖະແຫຼງການວຽງຈັນ ຂອງກອງປະຊຸມສຸດຍອດ ACMECS ຄັ້ງທີ 10; ເອກະສານແນວຄວາມຄິດ ວ່າດ້ວຍການຄຸ້ມຄອງຊັບພະຍາກອນນໍ້າ ໃນອະນຸພາກພື້ນແມ່ນໍ້າຂອງ. ພ້ອມກັນນີ້, ກອງປະຊຸມ ໄດ້ມອບຕໍ່ໃຫ້ ສສ ມຽນມາ ເປັນປະທານກອງປະຊຸມສຸດຍອດ ACMECS ຄັ້ງທີ.

ວັນທີ 26/11/2024, ກອງປະຊຸມເວທີປຶກສາຫາລືການຮ່ວມມື ແລະ ການປົກຄອງມະຫາສະໝຸດ ຄັ້ງທີ 5 ໄດ້ຈັດຂຶ້ນຢູ່ເມືອງຊານຢາ ( Sanya), ແຂວງໄຫໜານ (Hainan), ສປ.ຈີນ, ພາຍໃຕ້ຫົວຂໍ້ “ຄວາມກົມກຽວກັນ ແລະ ການເຮັດວຽກຮ່ວມກັນ ເພື່ອຄວາມກ້າວຫນ້າການປົກຄອງມະຫາສະຫມຸດໂລກ” (Global Ocean Governance: Rules, Responsibilities, and Powers), ຊຶ່ງມີຜູ້ຊ່ຽວຊານ, ນັກວິຊາການ, ພະນັກງານລັດຖະກອນ, ເຈົ້າໜ້າທີ່ຂັ້ນສູງຂອງສະຖານທູດຕ່າງປະເທດປະຈໍາຈີນ 300 ກວ່າຄົນ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ, ແລະພະແນກການເດີນທະເລທີ່ມາຈາກ 30 ກວ່າປະເທດແລະເຂດແຄວ້ນ ເຂົ້າຮ່ວມ, ອີກ 2,000 ຄົນ ເຂົ້າຮ່ວມກອງປະຊຸມຜ່ານອອນໄລນ໌. ໃນກອງປະຊຸມ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ໄດ້ສະເໜີຂໍ້ລິເລີ່ມສໍາຄັນໃນມະຫາສະໝຸດ 3 ຂໍ້ຄື: ① ຕ້ອງຊຸກຍູ້ການພັດທະນາມະຫາສະໝຸດໃຫ້ມີຄຸນນະພາບສູງ ແລະ ຍືນຍົງ, ② ຕ້ອງຮັກສາຄວາມໝັ້ນຄົງມະຫາສະໝຸດຮອບດ້ານ ແລະ ຍືນຍົງ, ③ ຕ້ອງຊຸກຍູ້ການແລກປ່ຽນ ລະຫວ່າງ ອາລະຍະທໍາມະຫາສະໝຸດໂລກ.

### 3) ພັກ PAP ຂອງສິງກະໂປ ເປີດກອງປະຊຸມໃຫຍ່

ວັນທີ 23-24/11/2024, ພັກກິດປະຊາ (PAP) ສິງກະໂປ ໄດ້ດໍາເນີນກອງປະຊຸມໃຫຍ່ຂອງພັກ, ພ້ອມທັງສະເຫຼີມສະຫຼອງວັນສ້າງຕັ້ງພັກ ຄົບຮອບ 70 ປີ ພາຍໃຕ້ຫົວຂໍ້ “ພ້ອມກັນກ້າວໄປຂ້າງໜ້າ”, ກອງປະຊຸມ ໄດ້ເລືອກຄະນະບໍລິຫານງານສູນກາງພັກ (CEC) ຊຸດທີ 38 ໂດຍຄັດເລືອກເອົາ ທ່ານ Heng Swee Keat, ເປັນປະທານພັກ, ທ່ານ Masagos Zulkifli, ເປັນຮອງປະທານພັກ, ທ່ານ Lawrence Wong , ເປັນເລຂາທິການໃຫຍ່ ທັງເປັນນາຍົກລັດຖະມົນຕີຂອງສິງກະໂປ.

### 4) ການເລືອກຕັ້ງຂອງອາເມຣິກາ

ການເລືອກຕັ້ງປະທານາທິບໍດີອາເມຣິກາ ຄັ້ງທີ 47 ໄດ້ຈັດຂຶ້ນໃນວັນທີ 5/11/2024, ມີຜູ້ອອກມາໃຊ້ສິດທັງໝົດ 170 ລ້ານຄົນ ຂອງຜູ້ມີສິດເລືອກຕັ້ງທັງໝົດ 244 ລ້ານຄົນ, ຊຶ່ງແມ່ນ ທ່ານ Donald Trump, ຜູ້ສະໝັກຮັບເລືອກຕັ້ງຂອງພັກ Republican ໄດ້ຮັບໄຊຊະນະການເລືອກຕັ້ງດ້ວຍຄະແນນສຽງຈາກຕົວແທນຜູ້ເລືອກຕັ້ງ

(electoral vote) 312 ສຽງ ໃນຈຳນວນຜູ້ເລືອກຕັ້ງທັງໝົດ 538 ຄົນ ແລະ ຍັງໄດ້ຄະແນນສຽງນິຍົມຈາກປະຊາຊົນ (Popular vote) 74,832,527 ສຽງ ເທົ່າກັບ 50.4%; ສ່ວນ ທ່ານ ນາງ Kamala Harris, ຈາກພັກ Democrat, ໄດ້ຮັບ 226 ສຽງ, ໄດ້ຄະແນນນິຍົມ 71,238,534 ຄະແນນ ເທົ່າກັບ 48%; ຄຽງຄູ່ກັບການເລືອກຕັ້ງປະທານາທິບໍດີ, ຍັງມີການເລືອກຕັ້ງສະມາຊິກສະພາຕ່ຳ 435 ບ່ອນນັ່ງ (ເລືອກຕັ້ງທຸກໆ 2 ປີ) ແລະ ສະມາຊິກສະພາສູງ 34 ບ່ອນນັ່ງ ໃນຈຳນວນ 100 ບ່ອນນັ່ງທັງໝົດ (ການເລືອກຕັ້ງສະມາຊິກສະພາສູງຄົບ 100 ບ່ອນນັ່ງ ແມ່ນຈັດທຸກໆ 6 ປີ, ແຕ່ 1/3 ຂອງສະມາຊິກ ແມ່ນຈະເລືອກທຸກໆ 2 ປີ). ຜົນການເລືອກຕັ້ງສະພາຕ່ຳ ແມ່ນພັກ Republican ໄດ້ 212 ບ່ອນນັ່ງ, ພັກ Democrat ໄດ້ 204 ບ່ອນນັ່ງ; ການເລືອກຕັ້ງສະພາຕ່ຳ ກໍແມ່ນພັກ Republican ໄດ້ 53 ບ່ອນນັ່ງ (ເພີ່ມຂຶ້ນ 4 ບ່ອນນັ່ງ ທຽບໃສ່ການເລືອກຕັ້ງປີ 2023), ຂະນະທີພັກ Democrat ໄດ້ 45 ບ່ອນນັ່ງ (ຫຼຸດລົງ 02 ບ່ອນນັ່ງ). ສິ່ງຜົນໃຫ້ພັກ Republican ໄດ້ໄຊຊະນະທຸກການເລືອກຕັ້ງ ແລະ ທ່ານ Donald Trump ຈະສາບານຕົວເຂົ້າຮັບຕຳແໜ່ງ ໃນວັນທີ 20 ມັງກອນ 2025.

### 5) ການເລືອກຕັ້ງປະທານາທິບໍດີໂມນໂດວາ

ພາຍຫຼັງການເລືອກຕັ້ງຮອບທຳອິດ ໃນວັນທີ 20/10/2024 ບໍ່ມີຜູ້ໄດ້ສຽງ 50% ຂຶ້ນໄປ, ຈຶ່ງໄດ້ຈັດການເລືອກຕັ້ງຮອບ 2 ໃນວັນທີ 3/11/2024, ຜົນການເລືອກຕັ້ງ ແມ່ນ ທ່ານ ນາງ Maia Sandu, ປະທານາທິບໍດີຄົນປັດຈຸບັນ, ຈາກພັກເຄື່ອນໄຫວເພື່ອຄວາມສາມັກຄີ ທີ່ມີນະໂຍບາຍນິຍົມສະຫະພາບເອີຣົບ ແລະ ຕາເວັນຕົກ ໄດ້ຮັບໄຊຊະນະ ກວມ 55.35%; ສ່ວນ ທ່ານ Alexandru Stoianoglo, ຈາກພັກສັງຄົມນິຍົມຂອງສາທາລະນະລັດໂມນດາວີ ໄດ້ຄະແນນ 44.65%. ເຮັດໃຫ້ ທ່ານ ນາງ Maia Sandu ເປັນປະທານາທິບໍດີໂມນໂດວາ ສະໄໝທີ 2. ການເລືອກຕັ້ງຄັ້ງນີ້ ເປັນທີ່ສົນໃຈຂອງຫຼາຍປະເທດ, ໜຶ່ງໃນນັ້ນ ແມ່ນ ຣັດເຊຍ ເນື່ອງຈາກ ປະເທດໂມນໂດວາ ເປັນໜຶ່ງໃນອະດີດສະຫະພາບໂຊວຽດ ແລະ ຍັງມີປະຊາຊົນຣັດເຊຍ ອາໄສຢູ່ຈຳນວນຫຼາຍ ແລະ ໂມນໂດວາ ລົງປະຊາມະຕິເພື່ອຢາກເຂົ້າເປັນສະມາຊິກສະຫະພາບເອີຣົບ ໂດຍມີປະຊາຊົນ 50% ກວ່າ ທີ່ເຫັນດີຢາກເຂົ້າ ແລະ ທາງລັດຖະບານໄດ້ຍື່ນໜັງສືສະໝັກເຂົ້າອີງການດັ່ງກ່າວ ໃນປີ 2022 ແຕ່ປັດຈຸບັນ ຍັງບໍ່ໄດ້ຮັບການອະນຸມັດເທື່ອ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ວັນທີ 22-24/11/2024, ທີ່ພະນົມເປັນ, ກຳປູເຈຍ ໄດ້ຈັດກອງປະຊຸມບັນດາພັກການເມືອງອາຊີ (ICAPP) ຄັ້ງທີ 12 ພາຍໃຕ້ຫົວຂໍ້ “ການຊອກຫາສັນຕິພາບ ແລະ ການປອງດອງກັນ” (A Quest for Peace and Reconciliation). ມີຜູ້ແທນ 200 ກວ່າຄົນ ທີ່ມາຈາກ 65 ພັກການເມືອງຂອງ 43 ປະເທດ ເຂົ້າຮ່ວມ. ຈຸດປະສົງເພື່ອຊຸກຍູ້ການເຈລະຈາ ແລະ ການຮ່ວມມືລະຫວ່າງບັນດາພັກການເມືອງອາຊີ, ແກ້ໄຂບັນດາສິ່ງທ້າທາຍໃນພາກພື້ນ ແລະ ທົ່ວໂລກ; ພ້ອມນີ້, ຍັງມີກອງປະຊຸມປີ່ນອ້ອມເຊັ່ນ: ກອງປະຊຸມສະພາວັດທະນະທຳອາຊີ (ACC), ຄັ້ງທີ 3, ເວທີປາໄສຂ່າວ ICAPP ຄັ້ງທີ 7 ແລະ ບັນດາກອງປະຊຸມທີ່ກ່ຽວຂ້ອງ. ກອງປະຊຸມໄດ້ຮັບຮອງເອົາຖະແຫຼງການສັນຕິພາບພະນົມເປັນ ແລະ ຖະແຫຼງການ ACC ພະນົມເປັນ, ໄດ້ສະແດງໃຫ້ເຫັນຄວາມມຸ່ງມາດປາດຖະໜາ, ຄວາມມຸ່ງໝັ້ນ ແລະ ການຮ່ວມມືລະຫວ່າງບັນດາສະມາຊິກ ICAPP ໃນການສະແຫວງ ຫາສັນຕິພາບ ແລະ ຄວາມປອງດອງກັນ. ກອງປະຊຸມໃຫຍ່ ICAPP ຄັ້ງທີ 13 ຈະຈັດຂຶ້ນທີ່ ສ.ເກົາຫຼີ ໃນປີ 2026.

ວັນທີ 23-26/11/2024, ທີ່ພະນົມເປັນ, ກຳປູເຈຍ ໄດ້ຈັດກອງປະຊຸມ ຄັ້ງທີ 11 ຂອງລັດຖະສະພາສາກົນເພື່ອຄວາມອົດກັ້ນ ແລະ ສັນຕິພາບ (International Parliament for Tolerance and Peace : IPTP 11), ພາຍໃຕ້ຫົວຂໍ້ “ການຊອກຫາເພື່ອສັນຕິພາບ, ຄວາມປອງດອງ ແລະ ຄວາມອົດທົນ.” ຊຶ່ງມີຜູ້ແທນ 272 ຄົນ ທີ່ມາຈາກ 53 ປະເທດເຂົ້າຮ່ວມ. ກອງປະຊຸມຍັງໄດ້ສຸມໃສ່ສອງຫົວຂໍ້ຍ່ອຍຄື: ການຊຸກຍູ້ສະຖາປັດຕະຍະກຳສາກົນແຫ່ງສັນຕິພາບ, ການກໍ່ສ້າງສັນຕິພາບ, ຄວາມປອງດອງຊາດ, ແລະ ຄວາມອົດທົນ; ການສົມທົບກັນຂອງລັດຖະບານ,

ລັດຖະສະພາ, ແລະ ສັງຄົມພົນລະເຮືອນ ແລະ ຮັດແໜ້ນລັດທິຫຼາຍຝ່າຍ, ການຮ່ວມມື, ແລະ ການຮ່ວມມືເພື່ອການຢູ່ຮ່ວມກັນ ແລະ ການເຊື່ອມໂຍງເຂົ້າກັນ. ກອງປະຊຸມຄັ້ງນີ້, ໄດ້ປະກາດກົດບັດສັນຕິພາບໂລກ, ຮັບຮອງເອົາຖະແຫຼງການພະນົມເປັນ ແລະ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ 3 ສະບັບກັບສະພາລະຫວ່າງລັດຖະສະພາອາຊຽນ (AIPA), ສະມາຄົມສາກົນຂອງສະມາຄົມສັນຕິພາບ (IAPP) ແລະ ຄະນະທີ່ປຶກສາກ່ຽວກັບນໍ້າສະພາແຫ່ງຊາດອາຊີ (AAWC).

ວັນທີ 6/11/2024, ພົນເອກ ອະວຸໂສ ມິນອອງລາຍ, ຜູ້ນຳມຽນມາ ໄດ້ພົບກັບ ສະຫາຍ ຫຼີ ສຽງ, ນາຍົກລັດຖະມົນຕີຈີນ, ສອງຝ່າຍໄດ້ປຶກສາຫາລືສະພາບການໃນມຽນມາ ຊຶ່ງພົນເອກອະວຸໂສ ມິນອອງລາຍ ໄດ້ຮຽກຮ້ອງໃຫ້ ຈີນ ມີສ່ວນຮ່ວມເພີ່ມຕື່ມ ໃນການຂົນຂວາຍບັນດາກຸ່ມຕໍ່ຕ້ານ ໃຫ້ຫັນມາເຈລະຈາກັບລັດຖະບານ ແລະ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ 7 ສະບັບ. ເຊັ່ນ: ຂົງເຂດກະສິກຳແລະກິລາ, ຂອບໜຶ່ງແລວ ໜຶ່ງເສັ້ນທາງຂອງຈີນ: 2 ໂຄງການໃຫຍ່ຄື: ໂຄງການແລວທາງເຊື່ອມຕໍ່ລະຫວ່າງຄຸນໝິງ ກັບລັດ Rakhine ຜ່ານເມືອງ Mandalay ທາງພາກກາງຂອງມຽນມາ ເຊື່ອມຕໍ່ກັບອ່າວ Bengal ແລະ ໂຄງການສ້າງທາງລົດໄຟ ເຊື່ອມລະຫວ່າງ Muse-Mandalay-Kyaukphyu.

ວັນທີ 12/11/2024, ຈີນ-ຣັດເຊຍ ໄດ້ຈັດກອງປະຊຸມປຶກສາຫາລືຄວາມໝັ້ນຄົງຍຸດທະສາດຈີນ-ຣັດເຊຍ ຄັ້ງທີ 19 ນຳໂດຍ ສະຫາຍ ວາງ ອີ້, ກຳມະການກົມການເມືອງສູນກາງພັກຄອມມູນິດຈີນ, ຫົວໜ້າຫ້ອງການຄະນະກຳມະການວຽກງານການຕ່າງປະເທດຂອງຄະນະກຳມະການສູນກາງພັກຄອມມູນິດຈີນ, ລັດຖະມົນຕີກະຊວງການຕ່າງປະເທດຈີນ ແລະ ທ່ານ ເຊີເກ ຊອຍກູ ເລຂາທິການສະພາຄວາມໝັ້ນຄົງແຫ່ງສະຫະພັນຣັດເຊຍ. ສອງຝ່າຍ ເຫັນດີສຸມໃສ່ຕິດຕາມການຜັນແປຂອງສະພາບການສາກົນ, ແລກປ່ຽນ ແລະ ການປະສານງານຢ່າງໃກ້ຊິດ, ເພີ່ມທະວີການປະສານງານຫຼາຍຝ່າຍ, ຮ່ວມກັນປົກປັກຮັກສາສະຖຽນລະພາບດ້ານຍຸດທະສາດໃນທົ່ວໂລກ; ສືບຕໍ່ຮ່ວມມືໃນອົງການສະຫະປະຊາຊາດ, ອົງການຮ່ວມມືຊຽງໄຮ້ ແລະ ບຣິກສ.

ວັນທີ 12/11/2024, ສປປ ເກົາຫຼີ ແລະ ລັດເຊຍ ໄດ້ລົງນາມຮັບຮອງ ສັນຍາ ວ່າດ້ວຍການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ລະຫວ່າງ ສປປ ເກົາຫຼີ ແລະ ສ.ລັດເຊຍ ທີ່ໄດ້ລົງນາມ ຢູ່ ສປປ ເກົາຫຼີ ໃນວັນທີ 19/06/2024 ໃຫ້ເປັນລັດຖະດຳລັດຂອງປະທານປະເທດ ສປປ ເກົາຫຼີ ໃນວັນທີ 11/11/2024 ຜ່ານມາ.  ຂໍ້ຕົກລົງໄດ້ລະບຸເຖິງການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນກໍລະນີທີ່ຝ່າຍໃດຝ່າຍໜຶ່ງຖືກຮຸກຮານ ອີກຝ່າຍຕ້ອງເຂົ້າຊ່ວຍເຫຼືອທັນທີ. ຂະນະທີ່ ສ.ເກົາຫຼີ, ສ.ອາເມລິກາ ແລະ ພັນທະມິດຕາເວັນຕົກຫຼາຍປະເທດ ກ່າວໂຈມຕີວ່າ ສປປ ເກົາຫຼີ ສົ່ງທະຫານ ປະມານ 10,000 ຄົນ ເຂົ້າໄປຣັດເຊຍ ເພື່ອສະໜັບສະໜູນທາງການທະຫານແກ່ ຣັດເຊຍ ຕໍ່ສູ້ກັບອູແກຣນ. ຝ່າຍ ສປປ ເກົາຫຼີ ແລະ ຣັດເຊຍ ໄດ້ຕອບໂຕ້ວ່າໃນບັນຫາດັ່ງກ່າວແມ່ນການຮ່ວມມືເພື່ອປ້ອງກັນກຈາກພາຍນອກ. ລະຫວ່າງວັນທີ 13-15/11/2024, ສ.ເກົາຫຼີ ຈັດການຊ້ອມຮົບຮ່ວມກັບອາເມຣິກາ ແລະ ຍີ່ປຸ່ນທາງພາກຕາເວັນອອກເກາະເຈຈູ ຂອງ ສ.ເກົາຫຼີ ເພື່ອຕອບໂຕ້ ສປປ ເກົາຫຼີ ທີ່ທົດລອງລູກສອນໄຟຂ້າມທະວີບແບບໃໝ່ຂອງ ສປປ ເກົາຫຼີ ໃນວັນທີ 31 ຕຸລາ ແລະ  ວັນທີ 5 ພະຈິກ 2024 ຜ່ານມາ. ການຊ້ອມຮົບຄັ້ງນີ້ ໄດ້ມີການຝຶກຊ້ອມປ້ອງກັນລູກສອນໄຟທາງທະເລ ແລະ ການປ້ອງກັນທາງໄຊເບີ, ຊຶ່ງປະກອບມີເຮືອບິນຂັບໄລ່, ເຮືອບິນລາດຕະເວນທາງທະເລ ແລະ ເຮືອບັນທຸກ ເຮືອບິນພະລັງງານນິວເຄລຍ USS George ຂອງ ອາເມຣິກາ ເຂົ້າຮ່ວມ. ຂະນະທີ່, ວັນທີ 23/11/2024, ກະຊວງປ້ອງກັນປະເທດ ສປປ ເກົາຫຼີ ໄດ້ກ່າວປະນາມການຊ້ອມຮົບດັ່ງກ່າວ ແລະ ກ່າວເຕືອນໃຫ້ຢຸດຕິການກະທຳທີ່ເປັນປໍລະປັກ, ຍຸແຍ່ໃຫ້ເກີດຄວາມບໍ່ໝັ້ນຄົງໃນພາກພື້ນເຊິ່ງອາດຈະສົ່ງຜົນກະທົບໃຫ້ມີການປະເຊີນໜ້າທາງດ້ານການທະຫານໃນແຫຼມເກົາຫຼີ ແລະ ບໍລິເວນໃກ້ຄຽງ ແລະ ການເຄື່ອນໄຫວຂອງກອງທັບອາເມລິກາທີ່ກຳນົດເປົ້າໝາຍມາທີ່ ສປປ ເກົາຫຼີ ອາດຈະນຳໄປສູ່ສະຖານະການສົງຄາມໄດ້; ຜູ້ນຳສູງສຸດ ສປປ ເກົາຫຼີ ຍັງໄດ້ຮຽກຮ້ອງໃຫ້ສ້າງຄວາມເຂັ້ມແຂງທາງການເມືອງ ແລະ ການທະຫານໃຫ້ມີປະສິດທິພາບໃນການສູ້ຮົບ.

ວັນທີ 25/11/24, ອາເມຣິກາ ກໍາລັງສ້າງແຜນປະຕິບັດການສຸກເສີນສໍາລັບການເຄື່ອນກໍາລັງພົນໃນຍີ່ປຸ່ນ ແລະ ຟີລິບປິນ ໃນກໍລະນີເກີດເຫດສຸກເສີນຢູ່ໄຕ້ຫວັນ. ກອງທັບເຮືອ ອາເມຣິກາ ຈະສົ່ງລູກສອນໄຟ (HIMARS) ຫຼາຍລໍາ ໄປປະຈໍາການຢູ່ຕາມດອນ Nansei ແລະ Kyushu ໄປຈົນເຖິງ Yonaguni ຂອງຍີ່ປຸ່ນ ທີ່ໃກ້ກັບໄຕ້ຫວັນ. ເມື່ອເກີດເຫດ ກອງກໍາລັງຕ່າງໆຂອງອາເມຣິກາ ຈະກະຈາຍກໍາລັງເຂົ້າຕັ້ງຖານຊົ່ວຄາວຢູ່ດອນຕ່າງໆ. ຂະນະດຽວກັນ, ກອງທັບອາເມຣິກາ ກໍຈະສົ່ງໜ່ວຍງານສະເພາະກິດຍິງລູກສອນໄຟໄລຍະໄກ ທີ່ສາມາດປະຕິບັດການໃນຫຼາຍທິດທາງ (Multi-Domain Task force) ລວມທັງທາງອາກາດ, ທາງບົກ, ທາງນໍ້າ, ທາງອາວະກາດ, ທາງໄຊເບີ້ ແລະ ຂໍ້ມູນຂ່າວສານ ໄປຟີລິບປິນ. ສ່ວນ ສປ.ຈີນ ກ່າວຂັດຄ້ານຢ່າງໜັກຕໍ່ບັນດາປະເທດທີ່ນໍາໃຊ້ບັນຫາໄຕ້ຫວັນ ເປັນຂໍ້ອ້າງໃນການເພີ່ມກໍາລັງທະຫານໃນພາກພື້ນ, ຍຸແຍ່ໃຫ້ເກີດຄວາມເຄັ່ງຕຶງ, ເກີດການປະເຊີນໜ້າ, ທໍາລາຍສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ.

## 2) ສະພາບການເອີຣົບ-ອາເມຣິກາ

### ຄວາມຂັດແຍ່ງອູແກຣນ-ຣັດເຊຍ

ຣັດເຊຍ ສາມາດຂັບໄລ່ທະຫານອູແກຣນ ອອກຈາກແຄວ້ນ kursk ຂອງຣັດເຊຍ ເທື່ອລະກ້າວ. ວັນທີ 4/11/2024, ຣັດເຊຍ ຍັງໄດ້ນໍາໃຊ້ເຮືອບິນທາງຍຸດທະວິທີ, ໂດຣນ, ລູກສອນໄຟ ແລະ ປືນໃຫຍ່ ໂຈມຕີຄັ້ງໃຫຍ່ ໃສ່ 132 ເປົ້າໝາຍໃນອູແກຣນລວມທັງຖານທີ່ໝັ້ນທາງທະຫານ, ສະໜາມບິນ ແລະ ພື້ນຖານໂຄງລ່າງດ້ານພະລັງງານ; ສາມາດຍິງລູກສອນໄຟ HIMARS ຕົກ 4 ລູກ, ລະເບີດ Hammer 1 ໜ່ວຍ ແລະ ໂດຣນ 42 ລໍາ. ວັນທີ 6/11/2024, ທ່ານ ໂຈ ໄບເດັນ, ປະທານາທິບໍດີອາເມຣິກາ ໄດ້ປະກາດວ່າຈະສົ່ງການຊ່ວຍເຫຼືອໃຫ້ອູແກຣນ 6 ຕື້ໂດລາສະຫະລັດ ກ່ອນທີ່ທ່ານຈະລົງຈາກຕໍາແໜ່ງໃນປີ 2025.

ວັນທີ 9/11/2024, ທ່ານ Keir Starmer, ນາຍກລັດຖະມົນຕີອັງກິດ ແລະ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ໄດ້ປຶກສາຫາລືກັບທ່ານ Joe Biden, ປະທານາທິບໍດີອາເມຣິກາ ກ່ຽວກັບການອະນຸຍາດໃຫ້ອູແກຣນ ໂຈມຕີເປົ້າໝາຍຕ່າງໆເລິກເຂົ້າໄປໃນປະເທດລັດເຊຍ ດ້ວຍອາວຸດຂອງຕາເວັນຕົກໄດ້. ຕໍ່ບັນຫາດັ່ງກ່າວ, ຣັດເຊຍ ຖະແຫຼງການໃນວັນທີ 13/11/2024 ວ່າ ຖ້າອູແກຣນ ໄດ້ຮັບອະນຸຍາດໃຫ້ໂຈມຕີເລິກເຂົ້າໄປໃນຣັດເຊຍໄດ້, ຣັດເຊຍຈະຖືວ່າ ການໂຈມຕີດັ່ງກ່າວເປັນການກະທໍາຂອງນາໂຕ້, ຊຶ່ງຈະເຮັດໃຫ້ນາໂຕ້ ເຂົ້າສູ່ຄວາມຂັດແຍ່ງໂດຍກົງກັບຣັດເຊຍ, ຣັດເຊຍ ຈະຕອບໂຕ້ທັນທີ ແລະ ຮ້າຍແຮງ. ຕໍ່ມາໃນວັນທີ 17/11/2024, ທ່ານ Joe Biden, ປະທານາທິບໍດີອາເມຣິກາ ອະນຸຍາດໃຫ້ອູແກຣນ ນໍາໃຊ້ລູກສອນໄຟ ATACMS ໂຈມຕີພື້ນທີ່ພາຍໃນຣັດເຊຍ. ຫຼັງຈາກນັ້ນ, ອູແກຣນ ໄດ້ຍິງລູກສອນໄຟ ATACMS ໃສ່ພາກພື້ນ Bryansk ຂອງຣັດເຊຍ ຊຶ່ງມີ 5 ລູກຖືກສະກັດໂດຍລະບົບປ້ອງກັນໄພທາງອາກາດ S-400 ແລະ Pantsir ຂອງຣັດເຊຍ, ສ່ວນ 1 ລູກ ທີ່ເຫຼືອຖືກທໍາລາຍ ແລະ ຕົກລົງບໍລິເວນພື້ນທີ່ຂອງກອງທັບຣັດເຊຍ ໃນພາກພື້ນ Bryansk ແລະ ໃນວັນດຽວກັນນີ້, ປະເທດເຢຍລະມັນ ປະກາດແຜນການຈະສົ່ງໂດຣນໂຈມຕີ (Helsing) ຈໍານວນ 4,000 ລໍາ ໃຫ້ແກ່ອູແກຣນ ໃນໄວໆນີ້ ແລະ ຈະຈັດສັນງົບປະມານ ປີ 2025 ຈໍານວນ 4 ຕື້ເອີໂຣ ເພື່ອສະໜັບໜູນອູແກຣນ.

**ກອງປະຊຸມ APEC**: ຈັດຂຶ້ນລະຫວ່າງວັນທີ 15-16 ພະຈິກ 2024 ທີ່ນະຄອນ Lima, ຂອງ Peru ພາຍໃຕ້ຫົວຂໍ້ "ເສີມສ້າງອໍານາດຮ່ວມກັນເຕີບໂຕ" ("Empower. Include. Grow.,") ມີຜູ້ນໍາຂອງ 21 ປະເທດສະມາຊິກ APEC ເຂົ້າຮ່ວມ. ໂດຍໄດ້ອອກຖະແຫຼງການ "Machu Picchu" ຂອງຜູ້ນໍາ APEC ປີ 2024 ແລະ ຖະແຫຼງການຮ່ວມ, ຊຶ່ງມີເນື້ອໃນສໍາຄັນບາງຕອນວ່າ: ໃຫ້ບັນລຸວິໄສທັດ APEC Putrajaya 2040 , ຜັນຂະຫຍາຍແຜນການດໍາເນີນງານ Aotearoa. ຄວາມຈະເລີນຮຸ່ງເຮືອງຂອງທຸກຄົນ ແລະ ຄົນລຸ້ນຕໍ່ໄປ; ຈັດຕັ້ງເພີ່ມທະວີການຮ່ວມມືບັນດາຂົງເຂດການຄ້າ ແລະ ການລົງທຶນ, ສິ່ງແວດລ້ອມ, ການປ່ຽນແປງຂອງດິນຟ້າອາກາດ, ຄວາມໝັ້ນຄົງດ້ານສະບຽງ

ອາຫານ ແລະ ພະລັງງານ; ການຮ່ວມມືຫຼາຍຝ່າຍມີຄວາມສຳຄັນ ມີປະສິດທິຜົນແກ່ການພັດທະນາ, ຮັບຮູ້ບັນດາຜົນສຳເລັດໃນການເຕີບໂຕເສດຖະກິດແບບກວມລວມ ແລະ ຍືນຍົງ ແລະ ຢືນຢັນຄືນໃໝ່ຄຳໝັ້ນສັນຍາຂອງຕົນເພື່ອຮັບປະກັນໃຫ້ ອາຊີ - ປາຊີຟິກ ແມ່ນພາກພື້ນທີ່ມີການເຄື່ອນໄຫວ ແລະ ເຊື່ອມໂຍງເຂົ້າກັນຫຼາຍທີ່ສຸດ. ພ້ອມນີ້ຍັງມີຖະແຫຼງການ Ichma ກ່ຽວກັບການທົບທວນຄືນໃຫມ່ກ່ຽວກັບເຂດການຄ້າເສລີຂອງອາຊີ-ປາຊີຟິກ, ຕາມແຜນ Lima ເພື່ອສົ່ງເສີມການຫັນປ່ຽນໄປສູ່ເສດຖະກິດຢ່າງເປັນທາງການ ແລະ ທົ່ວໂລກ (2025-2040), ກອງປະຊຸມຄັ້ງນີ້ຮັບຮອງກອງປະຊຸມ APEC ຄັ້ງຕໍ່ໄປຄື: APEC ສ.ເກົາຫຼີ 2025, APEC ສປ.ຈີນ 2026 ; APEC ຫວຽດນາມ 2027 ແລະ ຮັບຮອງການສະເໜີເປັນເຈົ້າພາບ APEC ຂອງສິງກະໂປ ໃນປີ 2030.

**ກອງປະຊຸມສຸດຍອດກຸ່ມ G20 ຄັ້ງທີ 19** ຈັດຂຶ້ນຢູ່ນະຄອນຣີໂອ ເດຈາເນໂຣ ປະເທດເບຣຊິນ ໃນລະຫວ່າງ 18-19/11/2024, ໂດຍມີຜູ້ນຳຂອງ 19 ປະເທດສະມາຊິກ, ສະຫະພາບອາຟຣິກາ ແລະ ສະຫະພາບເອີຣົບ(ສ່ວນຣັດເຊຍໄດ້ສົ່ງລັດຖະມົນຕີຕ່າງປະເທດເຂົ້າຮ່ວມ), ໄດ້ອອກຖະແຫຼງການວ່າ: ຜູ້ນຳກຸ່ມ G20 ຈະຮ່ວມມືກັນເພື່ອຕໍ່ສູ້ກັບຄວາມອຶດຫິວ, ຄວາມທຸກຍາກ ແລະ ຈະເນັ້ນເຮັດວຽກເພື່ອເພີ່ມຜົນຜະລິດທາງການກະເສດ ແລະ ຫຼຸດການສູນເສຍອາຫານ ແລະ ສິ່ງເສດເຫຼືອຢ່າງຍືນຍົງ; ຄຳນຶງເຖິງການເພິ່ງພາອາໄສຊຶ່ງກັນແລະກັນ ຂອງນາໆຊາດ ໃນການບັນລຸຄວາມໝັ້ນຄົງປອດໄພທາງດ້ານອາຫານ, ໂພຊະນາການ ແລະ ຄວາມຍືນຍົງຜ່ານນະໂຍບາຍການຄ້າແບບເປີດທີ່ສອດຄ່ອງກັບກົດລະບຽບຂອງອົງການການຄ້າໂລກ; ຢືນຢັນການຍຶດໝັ້ນໃນວາລະການພັດທະນາຂອງອົງການສະຫະປະຊາຊາດ ແລະ ຈະຊ່ວຍເຫຼືອປະເທດກຳລັງພັດທະນາໃຫ້ສາມາດນຳໃຊ້ຕ່ອງໂສ້ອຸດສາຫະກຳ, ຕ່ອງໂສ້ມູນຄ່າ ແລະ ຕ່ອງໂສ້ການສະໜອງ, ເລັ່ງຂະບວນການປັບໃຫ້ເປັນອຸດສາຫະກຳ ແລະ ການຄ້າທີ່ທັນສະໄໝ; ຕ້ານການສໍ້ລາດບັງຫຼວງ ແລະ ເງິນທຶນຜິດກົດໝາຍທີ່ກ່ຽວຂ້ອງ.

### 3. ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ສະຖານະການໃນຕາເວັນອອກກາງ ຍັງບໍ່ມີທ່າທີຈະຢຸດຕິລົງ, ເນື່ອງຈາກອິດສະຣາແອນ ບໍ່ລົດລະການໂຈມຕີ ໃນບັນດາປະເທດອ້ອມຂ້າງຕົນ ແລະ ໂຈມຕີແບບບໍ່ເລືອກຈຸດ, ມີປະຊາຊົນປາແລັດສະຕິນ ໃນເຂດກາຊາ ເສຍຊີວິດເກືອບ 100 ຄົນ ຕໍ່ວັນ; ອິດສະຣາແອນ ຍັງໄດ້ໂຈມຕີທາງອາກາດໃສ່ເຂດໃກ້ກັບສະໜາມບິນສາກົນເບຣຸດ ຂອງລີບັງ ແລະ ນະຄອນຫຼວງດາມາສກາສຂອງຊີຣີ ໂດຍອ້າງວ່າເພື່ອໂຈມຕີສຳນັກງານໜ່ວຍສືບຂ່າວລັບຂອງກຸ່ມຮິດບອນເລາະ. ສປຊ ໄດ້ກົດດັນໃຫ້ອິດສະຣາແອນ ອະນຸຍາດໃຫ້ລົດບັນທຸກເຄື່ອງຊ່ວຍເຫຼືອດ້ານມະນຸດສະທຳ ເຂົ້າໄປເຖິງທາງ ພາກເໜືອຂອງກາຊາ. ຂະນະທີ່, ກອງປະຊຸມສຸດຍອດສະໄໝພິເສດຂອງ ບັນດາປະເທດອາຣັບ ແລະ ອິດສະລາມ ທີ່ຈັດຂຶ້ນຢູ່ນະຄອນຫຼວງ Riyadh, ປະເທດອາຣັບບີ ຊາອຸດິດ ໄດ້ອັດລົງໃນວັນທີ 11/11/2024, ໄດ້ມີມະຕິເຕືອນເຖິງຄວາມຂັດແຍ່ງທີ່ເພີ່ມທະວີຄວາມຮຸນແຮງຂຶ້ນໃນຕາເວັນອອກກາງ ທີ່ສົ່ງຜົນກະທົບພາກພື້ນ ແລະ ສາກົນ; ຮຽກຮ້ອງໃຫ້ປະຊາຄົມສາກົນດຳເນີນການຢ່າງມີປະສິດທິພາບ ເພື່ອບັງຄັບໃຫ້ອິດສະຣາແອນ ປະຕິບັດຕາມກົດໝາຍສາກົນ ແລະ ປະນາມການໃຊ້ສອງມາດຕະຖານ ໃນການປະຕິບັດກົດໝາຍສາກົນ, ກົດໝາຍດ້ານມະນຸດສະທຳ ແລະ ກົດບັດ ສປຊ. ແນວໃດກໍຕາມ, ວັນທີ 25/11/2024, ໃນກອງປະຊຸມສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ ກ່ຽວກັບບັນຫາປາເລັດສະຕິນ-ອິດສະລາແອນ ອາເມຣິກາ ໃຊ້ສິດຄັດຄ້ານຕໍ່ມະຕິຢຸດຍິງໃນເຂດກາຊາເຮັດໃຫ້ຄວາມພະຍາຍາມຊຸກຍູ້ການຢຸດຍິງທັນທີຢູ່ເຂດກາຊາຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດບໍ່ສຳເລັດ.

ວັນທີ 26/11/2024, ອິດສະຣາແອນ ໄດ້ລົງນາມຂໍ້ຕົກລົງຢຸດຍິງກັບລີບັງ, ເປັນການປູທາງສູ່ການຢຸດຕິການປະທະກັນມາເປັນເວລາເກືອບ 14 ເດືອນ ທີ່ກ່ຽວພັນກັບບັນຫາທີ່ກຳລັງເຄັ່ງຮ້ອນຢູ່ໃນເຂດກາຊາ, ການຢຸດຍິງມີຜົນບັງຄັບໃຊ້ນັບແຕ່ເວລາ 4:00 ຂອງວັນທີ 27/11/2024, ກອງທັບລີບັງຈະເຂົ້າຄຸ້ມຄອງເຂດດິນແດນຂອງຕົນໃນ 60 ວັນຂ້າງໜ້າ, ອິດສະຣາແອນຈະຄ່ອຍໆຖອນຕົວ, ພົນລະເຮືອນຈະກັບຄືນປະເທດ.

## II.ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ມອບ-ຮັບໜ້າທີ່ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ



ວັນທີ 22/11/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ)ໄດ້ຈັດພິທີມອບ-ຮັບໜ້າທີ່ ລະຫວ່າງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ (ຜູ້ເກົ່າ) ກັບ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໂດຍການໃຫ້ກຽດເປັນປະທານ ຂອງ ສະຫາຍ ນາງ ສີໃສ ລືເດດມູນສອນ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີບັນດາການນຳ ຈາກອົງການຈັດຕັ້ງພັກ, ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງສູນກາງພັກ, ກະຊວງການຕ່າງປະເທດ, ບັນດາຜູ້ຕາງໜ້າສະມາຄົມຕ່າງໆທີ່ກ່ຽວຂ້ອງ, ພ້ອມດ້ວຍ ບັນດາສະມາຊິກພັກ ແລະ ພະນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ. ສະຫາຍ ສຸລິຍາ ພົມມີສິດ, ຮັກສາການຫົວໜ້າກົມຄຸ້ມຄອງພະນັກງານ, ຄະນະຈັດຕັ້ງສູນກາງພັກ ໄດ້ຂຶ້ນຜ່ານບັນດານິຕິກຳທີ່ກ່ຽວຂ້ອງ. ຈາກນັ້ນ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ກ່າວລາຍງານ ກ່ຽວກັບວຽກງານການເຄື່ອນໄຫວໂດຍຫຍໍ້ຂອງ ຄຕພ ນັບແຕ່ປີ 2021 ເປັນຕົ້ນມາ ຫຼັງຈາກນັ້ນ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຂຶ້ນກ່າວຮັບໜ້າທີ່ ແລະ ໄດ້ໃຫ້ຄຳໝາຍໝັ້ນວ່າ ຈະພ້ອມກັບໝູ່ຄະນະ ເພື່ອສືບຕໍ່ປະຕິບັດໜ້າທີ່ໃຫ້ມີປະສິດທິຜົນຍິ່ງຂຶ້ນ. ໃນຕອນທ້າຍ, ສະຫາຍ ນາງ ສີໃສ ລືເດດມູນສອນ ໄດ້ຕາງໜ້າໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ກ່າວໂອ້ລົມໃນພິທີດັ່ງກ່າວ.

### 2) ທູດ ສສ ຫວຽດນາມ ແລະ ສປ ຈີນ ປະຈຳ ສປປ ລາວ ເຂົ້າອວຍພອນ ຫົວໜ້າ ຄຕພ.

 

ວັນທີ 18/11/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ສສ ຫວຽດນາມ ປະຈຳ ສປປ ລາວ ໄດ້ເຂົ້າອວຍພອນ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ຮັບການແຕ່ງຕັ້ງເປັນລັດຖະມົນຕີກະຊວງການຕ່າງປະເທດຄົນໃໝ່, ພ້ອມທັງໄດ້ນຳເອົາຄວາມຊົມເຊີຍ ຂອງ ສະຫາຍ ເລຮວາຍຈຸງ, ເລຂາທິການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ແລະ ສະຫາຍ ບຸຍແທງເຊີນ, ກຳມະການສູນກາງພັກ, ລັດຖະມົນຕີກະຊວງການຕ່າງປະເທດ ສສ ຫວຽດນາມ ມາຍັງ ສະຫາຍ ທອງສະຫວັນ ພົມວິຫານ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈ ຕໍ່ ຄຳອວຍພອນຂອງຝ່າຍຫວຽດນາມ ກໍຄື ການສະໜັບສະໜູນ, ຮ່ວມມື ຢ່າງໃກ້ຊິດໃນຕະຫຼອດໄລຍະການປະຕິບັດໜ້າທີ່ວຽກງານທີ່ຜ່ານມາ, ເຖິງວ່າຈະຍົກຍ້າຍໄປຮັບໜ້າທີ່ໃໝ່ ກໍ່ຍັງຈະສືບຕໍ່ຮ່ວມກັບບັນດາສະຫາຍຫວຽດນາມ ສືບຕໍ່ເສີມຂະຫຍາຍສາຍພົວພັນ ລາວ-ຫວຽດນາມ ໃຫ້ກ້າວເຂົ້າສູ່ລວງເລິກ.

ເນື່ອງໃນໂອກາດດຽວກັນ, ວັນທີ 19/11/ 2024, ສະຫາຍ ນາງ ຝາງ ຫົງ, ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ກໍ່ໄດ້ເຂົ້າອວຍພອນ ສະຫາຍ ທອງສະຫວັນ ພົມວິຫານ, ພ້ອມໄດ້ນຳເອົາຄວາມຊົມເຊີຍ ຈາກ ສະຫາຍລັດຖະມົນຕີກະຊວງການຕ່າງປະເທດ ສປ ຈີນ ມາຍັງ ສະຫາຍລັດຖະມົນຕີກະຊວງການຕ່າງປະເທດ ສປປ ລາວ ຄົນໃໝ່, ໄດ້ຕີລາຄາສູງ ຕໍ່ຜົນງານ ແລະ ການປະກອບສ່ວນຂອງ ສະຫາຍ ທອງສະຫວັນ ພົມວິຫານ ຕໍ່ການພົວພັນຮ່ວມມື ຈີນ-ລາວ ໃນໄລຍະຜ່ານມາ.

### 3) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຢ້ຽມຢາມ-ເຮັດວຽກຢູ່ ສປ ຈີນ ແລະ ມົງໂກລີ




ວັນທີ 11-13/11/2024, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ພ້ອມຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ນະຄອນຫຼວງປັກກິ່ງ, ສປ.ຈີນ ເພື່ອປຶກສາຫາລື-ແລກປ່ຽນຄຳຄິດເຫັນ ກ່ຽວກັບ ທິດທາງການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ 2 ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ. ສອງຝ່າຍ ໄດ້ຕີລາຄາສູງ ແລະ ທົບທວນຄືນການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ສະບັບໃໝ່ ໃນໄລຍະຜ່ານມາ ວ່າ ການພົວພັນຮ່ວມມືສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຈີນ-ລາວ ທີ່ພວມຢູ່ໃນໄລຍະດີທີ່ສຸດໃນປະຫວັດສາດການພົວພັນຂອງສອງຝ່າຍ, ເຊື່ອໝັ້ນວ່າ: ການພົວພັນຮ່ວມມືສອງຝ່າຍ ກໍຄື ການສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງຮອບດ້ານ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ ປະຊາຊົນສອງຊາດນັບມື້ນັບຫຼາຍຂຶ້ນກວ່າເກົ່າ; ຕີລາຄາຄືນ ການຮ່ວມມື ສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ໃນປີ 2024; ປຶກສາຫາລື ແລະ ເຫັນດີເປັນເອກະພາບກັນຫຼາຍບັນຫາ ກ່ຽວກັບທິດທາງການຮ່ວມມືສອງຝ່າຍ ໃນການຈັດຕັ້ງປະຕິບັດ ແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ແລະ ບັນດາແຜນການຮ່ວມມື ສອງພັກ ລາວ-ຈີນ ປີ 2025.

ວັນທີ 13-16/11/2024, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ປະເທດມົງໂກລີ; ໄດ້ເຂົ້າຢ້ຽມຂ່ຳນັບ, ພົບປະ ແລະ ເຮັດວຽກກັບການນຳຂັ້ນສູງຂອງພັກປະຊາຊົນມົງໂກລີ ຫຼາຍພາກສ່ວນ. ໃນການພົບປະ, ສອງຝ່າຍ ໄດ້ຕີລາສູງຕໍ່ສາຍພົວພັນຕະຫຼອດໄລຍະຜ່ານມາ, ໄດ້ຮ່ວມກັນ ລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການສົ່ງເສີມການຮ່ວມມື ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນມົງໂກລີ ສະບັບໃໝ່ ເພື່ອຊຸກຍູ້ເສີມຂະຫຍາຍ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງພັກ ໃຫ້ມີບາດກ້າວຂະຫຍາຍຕົວໃໝ່, ຊຸກຍູ້ການພົວພັນຮ່ວມມື ສອງປະເທດ, ປະກອບສ່ວນເຂົ້າໃນການເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

4) **ຫົວໜ້າ ຄຕພ ຕ້ອນຮັບ ຫົວໜ້າກຳມາທິການ-ການທ່ອງທ່ຽວ ແຫ່ງ ສ. ຕາຕາສະຖານ,ສະຫະພັນຣັດເຊຍ**



ວັນທີ 05/11/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ຄະນະຜູ້ແທນດ້ານການທ່ອງທ່ຽວ ຂອງສາທາລະນະລັດ ຕາຕາສະຖານ, ສະຫະພັນຣັດເຊຍ ນຳໂດຍ ທ່ານ ເຊີເກ ອີວານົບ, ຫົວໜ້າກຳມາທິການແຫ່ງລັດດ້ານການທ່ອງທ່ຽວ ແຫ່ງ ສາທາລະນະລັດ ຕາຕາສະຖານ, ສະຫະພັນຣັດເຊຍ. ສະຫາຍ ທອງສະຫວັນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ການຢ້ຽມຢາມລາວຂອງຄະນະຜູ້ແທນ ຊຶ່ງເປັນການຮັດແໜ້ນການພົວພັນໃຫ້ມີໝາກຜົນຍິ່ງໆຂຶ້ນ, ໄດ້ມີການລົງນາມສັນຍາຮ່ວມມືດ້ານການທ່ອງທ່ຽວນຳກັນ ລະຫວ່າງ ບໍລິສັດທ່ອງທ່ຽວພັດທະນາຈຳປາໃໝ່ ຂອງລາວ ແລະ ກຸ່ມບໍລິສັດທ່ອງທ່ຽວຂອງ ຕາຕາສະຖານ; ຕີລາຄາສູງການຮ່ວມມືຜ່ານມາ ຊຶ່ງເປັນການປະກອບສ່ວນຊຸກຍູ້ສາຍພົວພັນຮ່ວມມືລະຫວ່າງປະເທດ ທາງສາຍພັກ, ສາຍລັດ ແລະ ວຽກງານການທູດປະຊາຊົນ, ດ້ານເສດຖະກິດ, ການຄ້າ, ການລົງທຶນ, ພະລັງງານ, ການສຶກສາ, ວິທະຍາສາດ-ເຕັກນິກ, ການທ່ອງທ່ຽວ ແລະ ດ້ານອື່ນໆ; ເຫັນຄວນສືບຕໍ່ຊຸກຍູ້ວຽກງານດັ່ງກ່າວໃຫ້ມີທ່າອ່ຽງເພີ່ມຂຶ້ນໃນອະນາຄົດ ພ້ອມທັງຄົ້ນຄວ້າເປີດຖ້ຽວບິນກົງ ລະຫວ່າງ ລາວ-ຣັດເຊຍ ຄືນໃໝ່.

### 5) ຮັກສາການຫົວໜ້າ ຄຕພ ຄົນໃໝ່ ຕ້ອນຮັບ ທູດ ສສ.ຫວຽດນາມ ແລະ ສປ.ຈີນ




ວັນທີ 25/11/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ສະຫາຍ ຫວງຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ ທີ່ໄດ້ມາອວຍພອນ ເນື່ອງໃນໂອກາດ ວັນຊາດ ທີ 2 ທັນວາ ຄົບຮອບ 49 ປີ ແລະ ຊົມເຊີຍການຮັບໜ້າທີ່ໃໝ່. ໃນໂອກາດນີ້, ສອງຝ່າຍ ຕ່າງກໍ່ໄດ້ຕີລາຄາສູງຕໍ່ ການພົວພັນຮ່ວມມືລະຫວ່າງ ສອງພັກ, ສອງລັດ ຜ່ານມາ; ເຫັນດີສືບຕໍ່ຮ່ວມມືກັນຢ່າງສະໜິດແໜ້ນ ໃນການຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງຂອງການນຳຂັ້ນສູງ ພັກ-ລັດ ກໍ່ຄື ບັນດາຖະແຫຼງການຮ່ວມສອງຝ່າຍລາວ-ຫວຽດນາມ; ເພື່ອປະກອບສ່ວນເຂົ້າໃນການ ເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໃຫ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ໃນວັນດຽວກັນ, ສະຫາຍ ນາງ ຟາງຫົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ໄດ້ເຂົ້າຊົມເຊີຍ ສະຫາຍ ບຸນເຫຼືອ ພັນດານຸວົງ ໃນໂອກາດທີ່ໄດ້ຮັບການແຕ່ງຕັ້ງເປັນ ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໄດ້ນຳເອົາຄວາມຊົມເຊີຍຈາກ ສະຫາຍ ຫຼີວ ຈ້ຽນຊາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ມາຍັງ ສະຫາຍ ບຸນເຫຼືອ ພັນດານຸວົງ. ໃນໂອກາດນີ້, ສອງຝ່າຍ ຕີລາຄາສູງ ຕໍ່ການຮ່ວມມືປະສານສົມທົບ ແລະ ຮ່ວມມືກັນ ລະຫວ່າງ ຄຕພ ລາວ ແລະ ຄຕພ ຈີນ ກໍ່ຄື ສະຖານທູດຈີນ ໃນໄລຍະຜ່ານມາ; ຈະສືບຕໍ່ຮ່ວມກັບມືກັນໃນການຊຸກຍູ້ເສີມຂະຫຍາຍການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຈີນ-ລາວ. ຊຸກຍູ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງການນຳສູງສຸດ ສອງພັກ, ສອງລັດ ລາວ-ຈີນ, ຈີນ-ລາວ; ຕິດຕາມຊຸກຍູ້ ຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ມີມາດຖະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ.

### 6) ຮັກສາການຫົວໜ້າ ຄຕພ ຕ້ອນຮັບ ທູດກູບາ ເຂົ້າຊຶມເຊີຍໃນໂອກາດຮັບໜ້າທີ່ໃໝ່



ວັນທີ 4/11/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ນ. Enna Esther Viant Valdes, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສ.ກູບາ ປະຈໍາ ສປປ ລາວ ໄດ້ເຂົ້າຊຶມເຊີຍ ໃນໂອກາດທີ່ໄດ້ຮັບການແຕ່ງຕັ້ງເປັນ ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ພ້ອມທັງນໍາເອົາຄວາມຊົມເຊີຍຈາກ ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ ມາຍັງ ສະຫາຍ ບຸນເຫຼືອ ພັນດານຸວົງ. ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ສ. ກູບາ ກໍຄື ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດກູບາ ທີ່ນັບມື້ນັບໄດ້ຮັບການເສີມຂະຫຍາຍ ແລະ ແໜ້ນແຟ້ນຍິ່ງໆຂຶ້ນ; ຈະສືບປະຕິບັດໜ້າທີ່ວຽກງານ ໃນການເປັນຂົວຕໍ່ປະສານສົມທົບກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນຂອງລາວ ເພື່ອປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ກູບາ-ລາວ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

### 7) ທູດອົດສະຕາລີ, ທູດອັງກິດ ຄົນໃໝ່ ປະຈໍາ ສປປ ລາວ ເຂົ້າຊຶມເຊີຍ ຮັກສາການຫົວໜ້າ ຄຕພ





ວັນທີ 25/11/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ນາງ MEGAN JONES, ເອກອັກຄະລັດຖະທູດ ອົດສະຕຣາລີ ປະຈໍາ ສປປ ລາວ ໄດ້ເຂົ້າຊຶມເຊີຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າ ຄຕພ ແລະ ຮ່ວມກັນປຶກສາຫາລື ກ່ຽວກັບ ທິດທາງ ການພົວພັນຮ່ວມມືສອງຝ່າຍ ໃນຕໍ່ໜ້າ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມ ມື ລະຫວ່າງ ສປປ ລາວ ແລະ ອົດສະຕຣາລີ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ມີໝາກຜົນຍິ່ງໆຂຶ້ນ.

ວັນທີ 10/11/2024, ທ່ານ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າ ຄຕພ ໄດ້ຕ້ອນຮັບ ທ່ານ ນ. ເມວ ບາຣໂລ (Mel Barlow), ເອກອັກຄະຣາຊະທູດ ວິສາມັນ ຜູ້ມີອໍານາດເຕັມ ແຫ່ງ ຣາຊະອານາຈັກອັງກິດ ແລະ ອຽກລັງເໜືອ ໃນໂອກາດມາດໍາລົງຕໍາແໜ່ງເປັນ ເອກອັກຄະຣາຊະທູດຄົນໃໝ່ ປະຈໍາ ສປປ ລາວ, ພ້ອມທັງຊົມເຊີຍ ທ່ານ

ບຸນເຫຼືອ ພັນດານຸວົງ ໃນໂອກາດໄດ້ຮັບການແຕ່ງຕັ້ງເປັນ ຮັກສາການ ຫົວໜ້າ ຄຕພ. ສອງຝ່າຍ, ໄດ້ຕີລາຄາສູງຕໍ່ ສາຍພົວພັນອັນດີ ລະຫວ່າງ ລາວ ແລະ ອັງກິດ ຕະຫຼອດໄລຍະ 69 ປີ ຜ່ານມາ, ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນ ການສ້າງສາພັດທະນາຂອງສອງປະເທດ; ສົ່ງເສີມສາຍພົວພັນຮ່ວມມືລະຫວ່າງ ສອງປະເທດລາວ-ອັງກິດ ໃຫ້ເຕີບ ໃຫຍ່ຂະຫຍາຍຕົວຍິ່ງໆຂຶ້ນ. ເພື່ອຜົນປະໂຫຍດຂອງສອງຝ່າຍ ກໍຄືເພື່ອພາລະກິດ ສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

**8) ຮອງຫົວໜ້າ ຄຕພ ຕ້ອນຮັບ ຫົວໜ້າພັກທາງເລືອກເພື່ອເຢຍລະມັນ**



ວັນທີ 20/11/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະ ນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ທ່ານ Tino Chrupalla, ຫົວໜ້າພັກທາງເລືອກເພື່ອເຢຍລະມັນ (Alternative for Germany), ສະມາຊິກລັດຖະສະພາເຢຍລະມັນ ພ້ອມດ້ວຍຄະນະ ທີ່ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ແຕ່ວັນທີ 19-22/11/2024. ສອງຝ່າຍ, ໄດ້ລາຄາສູງຕໍ່ ສາຍພົວພັນອັນດີລະຫວ່າງ ສປປ ລາວ ແລະ ເຢຍລະມັນ ຕະຫຼອດໄລຍະ 66 ປີ ຜ່ານມາ, ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການສ້າງສາ ພັດທະນາຂອງສອງປະເທດ; ເຊື່ອໝັ້ນວ່າ ການມາຢ້ຽມຢາມ ສປປ ລາວ ຄັ້ງນີ້ ຈະເປັນຂີດໝາຍໃນການສົ່ງເສີມການ ຮ່ວມມືສອງຝ່າຍ ໃຫ້ມີຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າເພື່ອຜົນປະໂຫຍດຂອງສອງປະເທດ ກໍ່ຄື ເພື່ອພາລະກິດ ສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.